# ການປິ່ນປົວຮັກສາທີ່ແທ້ຈິງ




ຈິນດາ, ວິຊາ ແລະ ຄູໂຮງຮຽນວັນອາທິດສອງຄົນ ໄດ້ມາຢ້ຽມຢາມ ທ້າວຮັກ ຜູ້ທີ່ຂາດຮຽນໄດ້ສອງອາທິດແລ້ວ ຢູ່ບ້ານ.
ແມ່ເຖົ້າຂອງຂ້ອຍເປັນໄຂ້, ຂ້ອຍຈຶ່ງໄປໃສບໍ່ໄດ້. ຂ້ອຍຕ້ອງຢູ່ເບິ່ງແຍງເພິ່ນ.
ແມ່ເຖົ້າໄດ້ກິນຢາໃສ່ແລ້ວ ແຕ່ກໍຍັງບໍ່ຮູ້ສຶກດີຂຶ້ນ.
ພຣະເຈົ້າສາມາດປິ່ນປົວຮັກສາພວກເຮົາຜ່ານທາງຢາ, ຜ່ານທາງທ່ານໝໍ, ຫຼື ຜ່ານການອັດສະຈັນ
ພຣະເຈົ້າ,ພວກຂ້ານ້ອຍອະທິຖານຂໍໃຫ້ພຣະອົງຊ່ວຍ ປິ່ນປົວຮັກສາແມ່ເຖົ້າຂອງ ທ້າວຮັກ ໃຫ້ເຊົາໄຂ້ດ້ວຍເຖີ້ນ.


ບັນດາຄູຢູ່ໂຮງຮຽນວັນອາທິດກໍໄດ້ພາກັນຊ່ວຍ ທ້າວຮັກ ເຮັດວຽກເຮືອນ ເພື່ອລາວຈະສາມາດຮຽນໄດ້.
ແຕ່ວ່າ ທ້າວຮັກ ກໍຍັງກັງວົນກ່ຽວກັບແມ່ເຖົ້າຂອງລາວຢູ່.
ເຫັນວ່າ ແມ່ເຖົ້າຂອງລາວຍັງປ່ວຍໜັກຢູ່, ທ້າວຮັກກໍໄດ້ອະທິຖານເພື່ອແມ່ເຖົ້າຂອງລາວ ຕາມທີ່ຄູໂຮງຮຽນວັນອາທິດໄດ້ເຮັດ.
ພຣະເຢຊູ ເອີ້ຍ ຂໍພຣະອົງຊ່ວຍປິ່ນປົວຮັກສາແມ່ເຖົ້າຂອງຂ້ານ້ອຍດ້ວຍເຖີ້ນ.


ເຊົ້າມື້ຕໍ່ມາ......
ຈ໊ວາບ ຈ໊ວາບ.
ທ້າວຮັກ ຍ່າງອອກໄປນອກບ້ານ ແລະ ເຫັນແມ່ເຖົ້າຂອງລາວເຮັດວຽກຢູ່. ເພິ່ນດີຂຶ້ນ ແລະ ແຂງແຮງ. ເຊິ່ງພຣະເຈົ້າ ໄດ້ປິ່ນປົວຮັກສາເພິ່ນ.


ທ້າວຮັກ ກໍໄດ້ກັບໄປຮຽນອີກທີ່ໂຮງຮຽນວັນອາທິດ ແລະ ໄດ້ບອກຂ່າວດີເລື່ອງທີ່ແມ່ເຖົ້າຂອງລາວໄດ້ຮັບການປິ່ນປົວຮັກສາໃຫ້ຫາຍດີ.
ຂໍຊ່ວຍອະທິຖານເພື່ອມືຂອງຂ້ອຍທີ່ເປັນລ່ອຍໃຫ້ດີແດ່.
ພຣະເຢຊູ ຂໍພຣະອົງຊ່ວຍປິ່ນປົວຮັກສາມືຂອງທ້າວຮັກ ຄືດັ່ງທີ່ພຣະອົງຊ່ວຍແມ່ເຖົ້າຂອງລາວໃຫ້ດີເປັນປົກກະຕິດ້ວຍເຖີ້ນ.
ຄືນນັ້ນ, ຮັກກໍໄດ້ອະທິຖານອີກເທື່ອໜຶ່ງກ່ອນຈະນອນ.
ຂ້ອຍ ຢາກເຫັນມືຂອງຂ້ອຍດີເປັນປົກກະຕິໄວໆເດ.


ເຊົ້າມື້ຕໍ່ມາ ທ້າວຣັກ ຕື່ນຂຶ້ນມາແຕ່ເຊົ້າ. ລາວ ຕື່ນເຕັ້ນຫຼາຍທີ່ຈະໄດ້ເຫັນພຣະເຈົ້າປິ່ນປົວຮັກສາມືຂອງລາວໃຫ້ດີເປັນປົກກະຕິຄືກັບແມ່ເຖົ້າຂອງລາວ.
ມືຂອງຂ້ອຍຍັງເປັນຄືເກົ່າ.
ໝົດມື້ນັ້ນ, ທ້າວຣັກ ແປກໃຈວ່າເປັນຫຍັງພຣະເຈົ້າຄືບໍ່ປິ່ນປົວມືຂອງລາວໃຫ້ຫາຍດີເປັນປົກກະຕິ.
ລາວໄດ້ພົບກັບວິຊ້າໃນລະຫວ່າງທາງກັບບ້ານ.
ສະບາຍດີຣັກ!
ຂ້ອຍຄິດວ່າພຣະເຈົ້າຄົງຈະບໍ່ຕ້ອງການປິ່ນປົວມືຂອງຂ້ອຍດອກ.
ເຈົ້າຄົງຈະຜິດຫວັງ ແຕ່ຈົ່ງຈື່ໄວ້ວ່າພຣະເຈົ້າຮັກເຈົ້າໃດ, ແລະພຣະອົງກໍຢູ່ກັບເຈົ້າຕະຫຼອດເວລາ.


ສິ່ງທີ່ວິຊ້າ
ເວົ້າມາເປັນຄວາມຈິງແທ້ໆບໍ?
ຄືນນັ້ນ ທ້າວຮັກ
ໄດ້ຝັນວ່າພຣະເຢຊູໄດ້ມາຫາລາວ
ຢ່າສູ່ຢ້ານ, ເຮົາໄດ້ຢູ່ກັບເຈົ້າ; ບໍ່ຕ້ອງ
ຕົກໃຈເພາະເຮົາເປັນພຣະເຈົ້າຂອງເຈົ້າ.
ເຮົາຈະຊ່ວຍເຈົ້າແລະ
ເຮັດໃຫ້ເຈົ້າມີກຳລັງ;
ເຮົາຈະຊ່ວຍເຈົ້າດ້ວຍມືອັນ
ຊອບທຳຂອງເຮົາ.


ເຊົ້າມື້ຕໍ່ມາ ທ້າວຮັກ ໄດ້ຕື່ນຂຶ້ນ
ມາແຕ່ເຊົ້າອີກເທື່ອໜຶ່ງ.
ວິຊາ ດຽວນີ້ຂ້ອຍເຂົ້າໃຈໃນສິ່ງທີ່
ເຈົ້າພະຍາຍາມບອກຂ້ອຍໃນມື້
ນັ້ນແລ້ວ.
ມື້ຄືນນີ້,
ຂ້ອຍໄດ້ຝັນວ່າພຣະເຈົ້າໄດ້ມາຫາ
ແລະ ເວົ້າກັບຂ້ອຍ.
ພຣະອົງບອກຂ້ອຍວ່າ
ພຣະອົງຮັກຂ້ອຍ ແລະ
ຢູ່ກັບຂ້ອຍສະເໝີ.
ເຖິງແມ່ນວ່າພຣະເຈົ້າບໍ່ໄດ້ປິ່ນປົວມືຂອງຂ້ອຍກໍ
ຕາມ, ແຕ່ພຣະອົງກໍໄດ້ປິ່ນປົວໃຈຂອງຂ້ອຍຜ່ານ
ຄວາມຮັກຂອງພຣະອົງ.



# ພຣະເຢຊູໄດ້ກ່າວໄວ້ວ່າ, “ເຮົາພໍໃຈໃຫ້ເຈົ້າດີ ຈົ່ງດີສະອາດສາ”

ມັດທິວ: 8: 3



## ຄໍາຖາມສົນທະນາ

ເຈົ້າເຄີຍຂໍໃຫ້ພຣະເຈົ້າປິ່ນປົວຮັກສາຜູ້ທີ່ເຈັບປ່ວຍບໍ?
ຈົ່ງແບ່ງປັນກ່ຽວກັບປະສົບການນັ້ນ
ທ້າວຮັກ ໄດ້ຮັບການອະທິຖານເພື່ອການປິ່ນປົວຮັກສາຂອງລາວ
ແຕ່ບໍ່ມີການປິ່ນປົວຮັກສາທາງດ້ານຮ່າງກາຍ. ຮັກ ຮູ້ສຶກແນວໃດ?
ຄວາມຝັນຂອງຮັກ ໄດ້ໃຫ້ກໍາລັງໃຈລາວແນວໃດ?



# ກິດຈະກຳ

ເຈົ້າຮູ້ຈັກຜູ້ທີ່ເຈັບປ່ວຍຢູ່ໃນຄອບຄົວ, ຊຸມຊົນ, ຫຼື ຄຣິສຕະຈັກຂອງເຈົ້າບໍ? ຈົ່ງໄປກັບເພື່ອນຂອງເຈົ້າ ແລະ ຢ້ຽມຢາມຜູ້ນັ້ນ. ຈົ່ງອະທິຖານເພື່ອລາວ ແລະ ຊ່ວຍລາວເຮັດວຽກບ້ານ ຫຼື ຊ່ວຍລາວຊື້ສິ່ງຂອງໃນທາງທີ່ເໝາະສົມ.

ຈົ່ງທວນຄືນສາມຫຼັກການເພື່ອຈະມີສຸຂະພາບທີ່ດີ. ຈົ່ງເວົ້າກັບເພື່ອນຂອງເຈົ້າກ່ຽວກັບສາມຫຼັກການນັ້ນທີ່ເຈົ້າສາມາດເຮັດໄດ້ໃນແຕ່ລະທ້ອງຖິ່ນເພື່ອເຮັດໃຫ້ພວກເຈົ້າຢູ່ຢ່າງສະອາດ.



1. ກິນດີ

-ລ້າງມືກ່ອນກິນເຂົ້າ

- ກິນອາຫານທີ່ສະອາດ ຫຼື ທີ່ລ້າງສະອາດແລ້ວ

-ປົກອາຫານໄວ້ ບໍ່ໃຫ້ແມງວັນຕອມ

2. ດື່ມດີ

- ດື່ມນ້ຳທີ່ຕົ້ມຟົດແລ້ວ

- ດື່ມນ້ຳທີ່ຜ່ານການກັ່ນຕອງແລ້ວ

- ໃຊ້ຈອກທີ່ສະອາດ ຫຼື ຈອກທີ່ໃຊ້ສະເພາະເພື່ອດື່ມນ້ຳ.







បងធំកម្ពុជា
ALONGSIDERS CAMBODIA

www.alongsiders.org
Email: serey@alongsiders.org
: